# ການສະຫຼຸບຕີລາຄາ
# ການຈັດຕັ້ງປະຕິບັດກາງສະໄໝແຜນພັດທະນາ
# ເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ແລະ
# ການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ
# ແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

**ນຳສະເໜີໂດຍ: ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ**

# ເນື້ອໃນນຳສະເໜີ

1. ການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດການສະໄໝແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025)
2. ຄວາມຄືບໜ້າການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

# ການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດກາງສະໄໝ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

## ປະກອບດ້ວຍ: 6 ເປົ້າໝາຍ ແລະ 25 ວຽກຈຸດສຸມບູລິມະສິດ

- ມີຂອບຕິດຕາມ ແລະ ປະເມີນຜົນ (M & E framework)
- ໄດ້ເຊື່ອມສານ ປພຍ (SDGs), ມາດຖານຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ LDC ແລະ ຍຸດທະສາດເພື່ອການເຕີບໂຕສີຂຽວ.



# ສະພາບແວດລ້ອມພາກພື້ນ, ສາກົນ ແລະ ພາຍໃນ

## ສະພາບພາຍນອກ

- ຜົນກະທົບຈາກການລະບາດໂຄວິດ-19
- ຄວາມຂັດແຍ້ງບາງຂົງເຂດ (ລາຄາ ພະລັງງານ, ອັດຕາເງິນເຟີ້ ທົ່ວໂລກ ເພີ່ມຂຶ້ນ)
- ແລະ ອື່ນໆ

## ສະພາບພາຍໃນ

- ຄວາມຫຍຸ້ງຍາກເສດຖະກິດ-ການເງິນ
- ຜົນກະທົບຈາກການລະບາດໂຄວິດ-19
- ໄພທຳມະຊາດ

# ເປົ້າໝາຍ 1: ການຂະຫຍາຍຕົວຂອງເສດຖະກິດ

## ຜົນໄດ້ຮັບທີ່ສຳຄັນ

- GDP ຂະຫຍາຍຕົວ 4,03% (ແຜນການ 5 ປີສະເລ່ຍ 4,0%)
- ຂະຫຍາຍຖານອາກອນ ແລະ ປັບປຸງກົນໄກການເກັບພາສີຕາມດ່ານສາກົນ, ຂາດດຸນງົບປະມານມີທ່າອ່ຽງຫຼຸດລົງ (ເນື່ອງຈາກລັດຖະບານໄດ້ສຸມໃສ່ປັບປຸງກົນໄກການຄຸ້ມຄອງໃຫ້ມີປະສິດທິພາບຫຼາຍຂຶ້ນ)
- ສ້າງຄວາມເຂັ້ມແຂງດ້ານມາດຕະການການຄຸ້ມຄອງເງິນຕາ
- ການຜະລິດກະສິກຳ, ອຸດສາຫະກຳ ເພື່ອທົດແທນການນຳເຂົ້າໄດ້ຂະຫຍາຍຕົວ

## ສິ່ງທ້າທາຍຕົ້ນຕໍ

- ຄຸນນະພາບການເຕີບໂຕຍັງບໍ່ທັນສູງ
- ອັດຕາເງິນເຟີ້ຢູ່ໃນລະດັບສູງ
- ເງິນກີບອ່ອນຄ່າ
- ຄຸນນະພາບຂອງການຜະລິດເປັນສິນຄ້າ

| | ປະຕິບັດ | ແຜນການ | ຄາດຄະເນ |
|---|---|---|---|
| GDP | 4.03 | 4.00 | ຄາດວ່າຈະບັນລຸແຜນ |
| ກະສິກຳ | 3.10 | 2.50 | ຄາດວ່າຈະບັນລຸແຜນ |
| ອຸດສາຫະກຳ | 4.53 | 4.10 | ຄາດວ່າຈະບັນລຸແຜນ |
| ບໍລິການ | 4.00 | 6.00 | ຄາດວ່າຈະບໍ່ບັນລຸແຜນ |
| ພາສີ-ອາກອນ | 3.60 | 5.80% | ຄາດວ່າຈະບໍ່ບັນລຸແຜນ |

| | ປະຕິບັດ | ແຜນການ | ຄາດຄະເນ |
|---|---|---|---|
| ອັດຕາແລກປ່ຽນແຕ່ລະປີທຽບໃສ່ເງິນໂດລາສະຫະລັດ | -18.32 | ±5 | ຄາດວ່າຈະບໍ່ບັນລຸແຜນ |
| ອັດຕາເງິນເຟີ້ | 18.25 | ≤ 6 | ຄາດວ່າຈະບໍ່ບັນລຸແຜນ |

# ເປົ້າໝາຍ 2: ການພັດທະນາຊັບພະຍາກອນມະນຸດ

## ຜົນໄດ້ຮັບທີ່ສຳຄັນ

- ອັດຕາການຈົບຊັ້ນປະຖົມສຶກສາເພີ່ມຂຶ້ນ
- ອັດຕາການຕາຍຂອງແມ່ ແລະ ເດັກ ຫຼຸດລົງ
- ຂະຫຍາຍອັດຕາການຊົມໃຊ້ວິດຖ່າຍ
- ການຝຶກອົບຮົມວິຊາຊີບຂອງໄວໜຸ່ມ

## ສິ່ງທ້າທາຍຕົ້ນຕໍ

- ການປະລະການຮຽນຂອງນັກຮຽນຊັ້ນປະຖົມ ແລະມັດທະຍົມຕົ້ນ, ຂາດແຄນຄູ
- ບັນຫາດ້ານໂພຊະນາການ ເຂດຊົນນະບົດ
- ການເຂົ້າເຖິງບໍລິການດ້ານສາທາລະນະສຸກຢູ່ເຂດຫ່າງໄກສອກຫຼີກ
- ການຄຸ້ມຄອງແຮງງານ (ແຮງງານໄປເຮັດວຽກປະເທດ)

| | ປະຕິບັດ | ແຜນການ | ຄາດຄະເນ |
|---|---|---|---|
| ອັດຕາເຂົ້າຮຽນໃຫມ່ລວມ ປ.5 | 96.2 | 97 | ສ່ຽງຈະບໍ່ບັນລຸ |
| ອັດຕາຈົບຊັ້ນປະຖົມ | 93.1 | 94 | ຈະສາມາດບັນລຸ |
| ອັດຕາການເລື່ອນຊັ້ນ ປ.5 ຂຶ້ນ ມ.1 | 84.5 | 85 | ຈະສາມາດບັນລຸ |
| ອັດຕາປະລະຂອງນັກຮຽນຊັ້ນປະຖົມ | 4.4 | 4 | ສ່ຽງຈະບໍ່ບັນລຸ |
| ອັດຕາເຂົ້າຮຽນໃຫມ່ລວມ ມ.4 | 65.3 | 68 | ສ່ຽງຈະບໍ່ບັນລຸ |
| ອັດຕາປະລະການຮຽນຂອງນັກຮຽນ ຊັ້ນມັດທະຍົມຕອນຕົ້ນ | 11.2 | 11 | ສ່ຽງຈະບໍ່ບັນລຸ |
| ປະຊາກອນຫນຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງ ຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ | 112,559 | 150,000 | ຈະສາມາດບັນລຸ |
| ນັກຮຽນທີ່ຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບທຽບໃສ່ຈຳນວນນັກຮຽນທີ່ມັດທະຍົມຕອນຕົ້ນພາຍໃນ ປີ 2025 | 1.4 | 3 | ສ່ຽງຈະບໍ່ບັນລຸ |
| ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳຫນັກຕ່ຳກວ່າມາດຕະຖານຂອງປະຊາກອນກຸ່ມເປົ້າຫມາຍ | 24.3 | 15 | ສ່ຽງຈະບໍ່ບັນລຸ |
| ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານຂອງປະຊາກອນກຸ່ມເປົ້າຫມາຍ | 32.8 | 27 | ສ່ຽງຈະບໍ່ບັນລຸ |
| ອັດຕາການເກີດລູກມີແພດຊ່ວຍ ຂອງປະຊາກອນກຸ່ມເປົ້າໝາຍ | 85.1 | 85 | ຈະສາມາດບັນລຸ |
| ອັດຕາການໃຫ້ວັກຊີນກັນພະຍາດໃນເດັກ ລຸ່ມ 1 ປີ ຂອງປະຊາກອນກຸ່ມເປົ້າໝາຍ | 96.2 | 95 | ຈະສາມາດບັນລຸ |
| ອັດຕາຊົມໃຊ້ນ້ຳສະອາດ ຂອງປະຊາກອນທັງໝົດ | 93.3 | 95 | ຈະສາມາດບັນລຸ |
| ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ຂອງຄອບຄົວທັງໝົດ | 84.6 | 85 | ຈະສາມາດບັນລຸ |

# ເປົ້າໝາຍ 3: ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ

## ຜົນໄດ້ຮັບທີ່ສຳຄັນ

- ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ
- ຈຳນວນຄອບຄົວ, ບ້ານ ແລະ ເມືອງທຸກຍາກຫຼຸດລົງເທື່ອລະກ້າວ
- ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ

## ສິ່ງທ້າທາຍຕົ້ນຕໍ

- ບັນຫາຄວາມທຸກຍາກຂອງປະຊາຊົນ (ຄ່າຄອງຊີບ, ລາຄາສະບຽງອາຫານ)
- ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ ຍັງຈຳກັດ (ເຂດຫ່າງໄກສອກຫຼີກ)

**ຜົນການຈັດຕັ້ງປະຕິບັດຕົວຊີ້ບອກສຳຄັນ**

| ຕົວຊີ້ບອກ | ຫົວໜ່ວຍ | ປະຕິບັດ | ຄາດໝາຍ | ຄາດໝາຍຜົນໄດ້ຮັບ |
|---|---|---|---|---|
| ສ້າງຄອບຄົວພົ້ນທຸກ | ຄອບຄົວ | 48.067 | 204.360 | ບໍ່ສຳເລັດ |
| ສ້າງບ້ານພົ້ນທຸກ | ບ້ານ | 482 | 3.104 | ບໍ່ສຳເລັດ |
| ສ້າງຄອບຄົວພັດທະນາ | ຄອບຄົວ | 50.076 | 245.754 | ບໍ່ສຳເລັດ |
| ສ້າງຕົວແບບບ້ານໃຫຍ່ ກາຍເປັນຕົວເມືອງນ້ອຍ | ບ້ານ | 12 | 10 | ສຳເລັດ |
| ສ້າງເມືອງພົ້ນທຸກ | ເມືອງ | 11 | 69 | ບໍ່ສຳເລັດ |
| ສ້າງບ້ານພັດທະນາ | ບ້ານ | 559 | 4.420 | ບໍ່ສຳເລັດ |

# ເປົ້າໝາຍ 4: ປົກປັກຮັກສາສິ່ງແວດລ້ອມ

## ຜົນໄດ້ຮັບທີ່ສຳຄັນ

- ສຳເລັດການສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຮອບດ້ານ
- ສ້າງສະຖານີອຸຕຸນິຍົມ, ອຸທົກກະສາດ
- ການຜະລິດກະສິກຳສະອາດ, ການນຳໃຊ້ລົດໄຟຟ້າ, ພະລັງງານລົມ, ແສງອາທິດ
- ໄດ້ສົ່ງເສີມວຽກງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ (ໂຄງການຊື້-ຂາຍກາກບອນ ຢູ່ພາກເໜືອ)

## ສິ່ງທ້າທາຍຕົ້ນຕໍ

- ການອອກໃບຕາດິນ
- ການຄຸ້ມຄອງສິ່ງເສດເຫຼືອ
- ຜົນກະທົບຕໍ່ສິ່ງແວດລ້ອມ (ການບຸກລຸກປ່າ, ໂຄງການພັດທະນາ)

# ເປົ້າໝາຍ 5: ປັບປຸງໂຄງລ່າງພື້ນຖານ ແລະ ການຮ່ວມມື

## ຜົນໄດ້ຮັບທີ່ສຳຄັນ

- ການກໍ່ສ້າງໂຄງລ່າງພື້ນຖານຄົມມະນາຄົມມີຄວາມຄືບໜ້າດີສົມຄວນ
- ສຳເລັດການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ລວມທັງສິ່ງອຳນວຍຄວາມສະດວກຕ່າງໆເພື່ອໝູນໃຊ້ເສັ້ນທາງລົດໄຟລາວ-ຈີນ
- ສຳເລັດການກໍ່ສ້າງທ່າບົກ 3 ແຫ່ງ ແລະ ສຶກສາຄວາມເປັນໄປໄດ້ໃນການສ້າງທ່າບົກອີກ 6 ແຫ່ງ

## ສິ່ງທ້າທາຍຕົ້ນຕໍ

- ການອຳນວຍຄວາມສະດວກໃຫ້ການບໍລິການຂົນສົ່ງ
- ການຄຸ້ມຄອງ ແລະ ບູລະນະຮັກສາເສັ້ນທາງ (ເສັ້ນທາງເປ່ເພຫຼາຍແຫ່ງ)

# ເປົ້າໝາຍ 6: ການຄຸ້ມຄອງບໍລິຫານລັດ

## ຜົນໄດ້ຮັບທີ່ສໍາຄັນ

- ປັບປຸງພາລະບົດບາດ ແລະ ກົງຈັກການຈັດຕັ້ງຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ
- ໄດ້ທົດລອງຫັນຫົວໜ່ວຍວິຊາການທີ່ມີລາຍຮັບ ໄປສູ່ກຸ້ມຕົນເອງດ້ານງົບປະມານ 5 ຫົວໜ່ວຍ ແລະ ເພີ່ມອີກ 2 ຫົວໜ່ວຍ (ກົມພາສີ ແລະ ກົມສວຍສາອາກອນ)
- ສ້າງສູນບໍລິການປະຕູດຽວໄດ້ 9 ແຫ່ງ (ເທົ່າກັບ 60% ຂອງແຜນການ)

## ສິ່ງທ້າທາຍຕົ້ນຕໍ

- ກົນໄກການປະສານງານຍັງບໍ່ທັນເຂັ້ມແຂງ
- ການອະນຸມັດການລົງທຶນຂອງພາກເອກະຊົນບາງກໍລະນີຍັງມີຫຼາຍຂັ້ນ, ຫຼາຍຂອດ ພາໃຫ້ຊັກຊ້າ
- ຄວາມຮູ້ຄວາມສາມາດຂອງບຸກຄະລາກອນຍັງຈໍາກັດ
- ຖານຂໍ້ມູນຮັບໃຊ້ການພັດທະນາຍັງຈໍາກັດ

# ຄວາມຄືບໜ້າການກະກຽມ ສ້າງແຜນການ 5 ປີ ຄັ້ງທີ X (2026-2030)

# ແຜນດຳເນີນງານການສ້າງແຜນ X

1. **ເດືອນ 4/2023**: ນຍ ແຕ່ງຕັ້ງຄະນະຮັບຜິດຊອບ (ຕາມຂໍ້ຕົກລົງ 56/ນຍ)
2. **ຕົ້ນເດືອນ 6/2023**: ທິດຊີ້ນຳກອງປະຊຸມຄົບຄະນະບໍລິຫານງານ ຄັ້ງທີ 6 ກະກຽມການສ້າງແຜນ X
3. **24/7/2023**: ລາຍງານໂຄງຮ່າງກອງປະຊຸມລັດຖະບານ ເດືອນກໍລະກົດ
4. **ເດືອນ 10-12/2023**: ລະດົມແນວຄວາມຄິດການສ້າງແຜນ X ກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ
5. **ທ້າຍເດືອນ 12/2023**: ກະຊວງ ຜທ ອອກຄຳແນະນຳສ້າງແຜນ 10 ໃຫ້ຂະແໜງການ, ແຂວງ, ເມືອງ ແລະ ບ້ານ
6. **ຕົ້ນເດືອນ 3/2024**: ປຶກສາຫາລືຫົວຂໍ້ວິທະຍາສາດເພື່ອຮັບໃຊ້ການສ້າງແຜນ X
7. **ເດືອນ 4-5/2024**: ນຳສະເໜີຮ່າງເບື້ອງຕົ້ນ ຕໍ່ກອງປະຊຸມລັດຖະບານ, ກົມການເມືອງ ແລະ ສູນກາງ ຄັ້ງທີ 8

# ຂະບວນການ ແລະ ແຜນດຳເນີນງານການສ້າງແຜນ X

**8** — ເດືອນ 9-10/2024

**ນຳສະເໜີຮ່າງທີ 1 ຕໍ່**ກປຊ
ລັດຖະບານ, ກົມການເມືອງ
ແລະ ສູນກາງ ຄັ້ງທີ 9

**9** — ເດືອນ 11-12/2024

ປັບປຸງຮ່າງແຜນ ແລະ ນຳໄປ
ທາບທາມ ທົ່ວປະເທດ

**10** — ເດືອນ 3-4/2025

**ນຳສະເໜີຮ່າງທີ 2 ຕໍ່**ກປຊ
ລັດຖະບານ, ກົມການເມືອງ
ແລະ ສູນກາງ ຄັ້ງທີ 10

**11** — ເດືອນ 9-10/2025

**ນຳສະເໜີຮ່າງທີ 3 ຕໍ່**ກປຊ
ລັດຖະບານ, ກົມການເມືອງ,
ສູນກາງ ຄັ້ງທີ 11

**12** — ເດືອນ 11-12/2025

**ນຳສະເໜີຮ່າງທີ 4**
**ຕໍ່**ກປຊ ສູນກາງພັກສະ
ໄໝວິສາມັນ

**13** — ເດືອນ 1/2026

ນຳສະເໜີ ຮ່າງແຜນ
ຕໍ່ກປຊໃຫຍ່ທົ່ວປະເທດ
ຄັ້ງທີ XII ຂອງພັກ

**14** — ເດືອນ 3/2026

ນຳສະເໜີແຜນ 5ປີ ຕໍ່ກປຊ ຄັ້
ປະຖົມມະລຶກ ຂອງ ສະພາແຫ່
ຊາດ ຊຸດທີ X

# ບົດບາດ ແລະຄວາມສຳຄັນແຜນການ 5 ປີ ຄັ້ງທີ X(2026-2030)

| 1 | 2 | 3 | 4 |
| --- | --- | --- | --- |
| **ຍຸດທະສາດ ແລະ ວິໄສທັດ ຮອດປີ 2030** | **ບັນລຸເງື່ອນໄຂການ ຫຼຸດພົ້ນອອກຈາກ** LDCs | **ຍຸດທະຍາດການ ເຕີບໂຕສີຂຽວແຫ່ງ ຊາດ 2030** | **ເປົ້າໝາຍການ ພັດທະນາແບບຍືນ ຍົງ** |
| **ປະເທດລາຍຮັບປານ ກາງສູງ**ຕາມທິດເສດຖະກິດ-ສັງຄົມພູມປັນຍາ, ສີຂຽວແລະ ຍືນຍົງ | GNI, HAI, EVI | ເພື່ອໃຫ້ການຂະຫຍາຍຕົວ ເສດຖະກິດມີປະສິດທິພາບ ແລະ ມີຄວາມຍືນຍົງ | ເພື່ອລຶບລ້າງຄວາມທຸກຍາກ, ຮັກສາ ສິ່ງແວດລ້ອມ, ປະຊາຊົນມີຄວາມ ສະຫງົບ ແລະ ຮັ່ງມີ **(18 ເປົ້າໝາຍ)** |

# ບ່ອນອີງໃນການສ້າງແຜນ X

1. ການສະຫຼຸບການສະໄໝແຜນການ 5 ປີ ຄັ້ງທີ X (2021-2025)

2. ທ່າອ່ຽງຂອງຂອງພາກພື້ນ ແລະ ສາກົນໃນປັດຈຸບັນ ແລະ ຕໍ່ໜ້າ

3. ທ່າແຮງບົ້ມຊ້ອນຂອງປະເທດ, ຂະແໜງການ ແລະ ທ້ອງຖິ່ນ

# ທ່າແຮງບົມຊ້ອນ

## 4 ຂະແໜງເສດຖະກິດປາຍແຫຼມ

(1) ຂະແໜງການຜະລິດກະສິກຳ ແລະ ປຸງແຕ່ງຜະລິດຕະພັນກະສິກຳເພື່ອສົ່ງອອກ

(2) ຂະແໜງບໍລິການທ່ອງທ່ຽວ

(3) ຂະແໜງອຸດສາຫະກຳປຸງແຕ່ງທີ່ເປັນຕ່ອງໂສ້ຖານການຜະລິດພາກພື້ນ (ຕິດພັນກັບທ່າແຮງດ້ານຊັບພະຍາກອນ, ດ້ານທີ່ຕັ້ງ ແລະ ການເຊື່ອມຈອດ)

(4) ຂະແໜງບໍລິການຂົນສົ່ງ ແລະ ໂລຈິສຕິກ(ຕິດພັນກັບທ່າແຮງດ້ານທີ່ຕັ້ງ).

## 3 ຂະແໜງການສະໜັບສະໜູນ

(1) ຂະແໜງພະລັງງານໄຟຟ້າ

(2) ຂະແໜງຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ

(3) ຂະແໜງເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານຮັບໃຊ້ເສດຖະກິດດິຈິຕອນ

# ທິດທາງລວມ

1 ຍົກສູງລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ, ຮັບປະກັນສະຖຽນລະພາບການເມືອງ ຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບສຸກ, ມີຄວາມເປັນສາມັກຄີເປັນປຶກແຜ່ນ, ປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ;

2 ເສດຖະກິດມີຄວາມເຂັ້ມແຂງ, ເປັນເຈົ້າຕົນເອງນັບມື້ພົ້ນເດັ່ນ, ຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນໄດ້ຮັບການແກ້ໄຂຢ່າງຈະແຈ້ງ, ບໍ່ສ້າງໜີ້ສິນໜັກໜ່ວງ; ການຄຸ້ມຄອງ-ບໍລິຫານເສດຖະກິດ ດຳເນີນໄປຖືກຕ້ອງຕາມກົນໄກຕະຫຼາດ ທີ່ມີການນຳພາຂອງພັກ, ການດັດສົມ, ຄຸ້ມຄອງຂອງລັດ ຢ່າງເຂັ້ມງວດ;

3 ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ແລະ ເຊື່ອມໂຍງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ຖືສຳຄັນການພັດທະນາຊັບພະຍາກອນມະນຸດ ຮັບປະກັນຄວາມສົມສ່ວນລະຫວ່າງການພັດທະນາເສດຖະກິດກັບການພັດທະນາສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມຕາມທິດສີຂຽວ ແລະ ຍືນຍົງ;

4 ຊັບພະຍາກອນມະນຸດ ໄດ້ຮັບການກໍ່ສ້າງ ແລະ ພັດທະນາ, ສາມາດຕອບສະໜອງໃຫ້ແກ່ການສ້າງສາປະເທດໃນເງື່ອນໄຂໃໝ່, ຖັນແຖວນັກຮຽນຮູ້-ປັນຍາຊົນ ໄດ້ປະກອບສ່ວນເຂົ້າໃນການຄົ້ນຄ້ວາ, ການປະດິດສ້າງໃໝ່ໃຫ້ແກ່ປະເທດຊາດ ນັບມື້ນັບຫຼາຍ ແລະ ໂດດເດັ່ນຂຶ້ນ;

5 ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດສ້າງລັດທີ່ປົກຄອງດ້ວຍກົດໝາຍພາຍໃຕ້ການນຳພາຂອງພັກ;

6 ເຄື່ອນໄຫວວຽກງານການຕ່າງປະເທດຢ່າງຫ້າວຫັນ, ໄດ້ຮັບຄວາມເຊື່ອໝັ້ນ, ສະໜັບສະໜູນ ແລະ ຊ່ວຍເຫຼືອຈາກເພື່ອນມິດ, ມີບົດບາດພົ້ນເດັ່ນ ໃນເວທີພາກພື້ນ ແລະ ສາກົນ.

# ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X ປະກອບມີ 6 ເປົ້າໝາຍ ຄື:

ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ

ຊັບພະຍາກອນມະນຸດມີຄຸນນະພາບ ແລະ ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ

ຊີວິດການເປັນຢູ່ໄດ້ຮັບການຮັບປຸງດີຂຶ້ນ, ສັງຄົມທີ່ໜ້າຢູ່ ແລະ ສີວິໄລ

ການຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ການຄຸ້ມຄອງ ແລະ ບໍລິຫານລັດທີ່ມີປະສິດທິພາບ, ການເມືອງມີສະຖຽນລະພາບ ແລະ ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ

ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ

# ວຽກຈຸດສຸມຂອງແຜນການ 5 ປີ ຄັ້ງທີ X

1. ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ
2. ປັບປຸງເສດຖະກິດມະຫາພາກໃຫ້ມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ
3. ຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບ ແລະ ປະສິດທິຜົນສູງ
4. ສົ່ງເສີມ ແລະ ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄປສູ່ຄຸນນະພາບໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນ
5. ພັດທະນາວິສາຫະກິດລັດ ແລະ ເສດຖະກິດຮ່ວມໝູ່ຂອງປະຊາຊົນ ເພື່ອສ້າງພື້ນຖານໜັກແໜ້ນໃຫ້ແກ່ການຜະລິດ ແລະ ການບໍລິການສັງຄົມ

1. ພັດທະນາການສຶກສາໃຫ້ມີຄຸນນະພາບ
2. ປັບປຸງຄຸນນະພາບວຽກງານສາທາລະນະສຸກ, ການບໍລິການດ້ານສາທາລະນະສຸກ, ວຽກງານໂພຊະນາການ
3. ພັດທະນາແຮງງານໃຫ້ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ

# ວິໄສທັດ / ວຽກຈຸດສຸມຂອງແຜນການ 5 ປີ ຄັ້ງທີ X

1. ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ
2. ປັບປຸງ ແລະ ຂະຫຍາຍລະບົບປະກັນສັງຄົມ ແລະ ລະບົບປົກປ້ອງສັງຄົມໃຫ້ກວ້າງຂວາງ ແລະ ມີຄຸນນະພາບ
3. ພັດທະນາຕົວເມືອງໃຫ້ມີຄວາມສະຫງົບ, ສະອາດ ແລະ ສີຂຽວ
4. ພັດທະນາແມ່ຍິງ, ໄວໜຸ່ມ ແລະ ເດັກ ໃຫ້ມີຄຸນນະພາບດີຂຶ້ນ
5. ສົ່ງເສີມວັດທະນະທຳ ແລະ ສັງຄົມທີ່ສີວິໄລ

1. ປົກປັກຮັກສາ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດປ່າໄມ້, ທີ່ດິນ, ນໍ້າ ແລະ ແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ
2. ສົ່ງເສີມວຽກງານການເຕີບໂຕສີຂຽວ ແລະ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ
3. ສ້າງຄວາມເຂັ້ມແຂງເຝົ້າລະວັງ ແລະ ກຽມຄວາມພ້ອມຮັບມືກັບໄພພິບັດທຳມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນ ຢ່າງທັນການ

# ວຽກຈຸດສຸມຂອງແຜນການ 5 ປີ ຄັ້ງທີ X



1. ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ;
2. ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ;
3. ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.



1. ການພັດທະນາພື້ນຖານໂຄງລ່າງເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ
2. ການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ
3. ການພັດທະນາເຂດແຄ້ວນ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ;
4. ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ.

# ຂໍຂອບໃຈ